Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development
and Cooperation SDC

ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

Co-funded by
the European Union



# ຮ່ວມມືກັນເພື່ອການປົກຄອງທີ່ດີ

## ແຜນງານການຮ່ວມມືຂອງທີມງານເອີຣົບ ກັບ ລັດຖະບານ ແຫ່ງ ສປປ ລາວ

### ແຜນງານການຮ່ວມມືລະຫວ່າງທີມເອີຣົບ ແລະ ລັດຖະບານ ແຫ່ງ ສປປ ລາວ

ແຜນງານການມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ຫຼື ແຜນງານ CEGGA ແມ່ນແຜນງານລິເລີ່ມຮ່ວມມືລະຫວ່າງ ສະຫະພາບເອີຣົບ, ປະເທດເຢຍລະມັນ, ປະເທດສະວິສເຊີແລນ ແລະ ລັດຖະບານແຫ່ງ  ສປປ ລາວ, ແລະ ເປັນສ່ວນໜຶ່ງໃນແຜນງານຂອງທີມງານເອີຣົບ ທີ່ສອດຄ່ອງກັບ ແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ  ຄັ້ງທີ່ 9 ແລະ ເປັນແຜນງານຮ່ວມມືທຳອິດຂອງ ທີມງານເອີຣົບໃນ ສປປ ລາວ. ບັນດາປະເທດສະມາຊິກຂອງສະພາບເອີຣົບ ໄດ້ມອບໝາຍໃຫ້ຫ້ອງການ GIZ ເປັນຜູ້ຕາງໜ້າໃນການຈັດຕັ້ງປະຕິບັດແຜນງານ CEGGA. ກະຊວງພາຍໃນ ໄດ້ຮັບມອບໝາຍ ຈາກລັດຖະບານ ແຫ່ງ ສປປ ລາວ ໃຫ້ເປັນຜູ້ຈັດຕັ້ງປະຕິບັດແຜນງານຕາງໜ້າໃຫ້ແກ່ ສປປ ລາວ.  ແຜນງານຮ່ວມມືຂອງທີມງານເອີຣົບສຳລັບ  ສປປ ລາວ ນີ້ແນ່ໃສ່ການປະກອບສ່ວນຕໍ່ວຽກງານການປົກຄອງທີ່ດີ, ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ແລະ ສິດທິມະນຸດທີ່  ສອດຄ່ອງກັບຈຸດປະສົງສະເພາະ 6 ຂອງຍຸດທະສາດແຜນງານຮ່ວມຂອງທີມງານເອີຣົບ ແລະ ປັບປຸງການປົກຄອງ ແລະ ການບໍລິຫານລັດ ແລະ ສ້າງສັງຄົມໃນມີຄວາມສະເໜີພາບ, ຍຸຕິທຳ ແລະ ໄດ້ຮັບການປົກປ້ອງດ້ວຍລະບຽບກົດໝາຍ. ນັ້ນແມ່ນຜົນໄດ້ຮັບທີ່ 6 ຂອງແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ່ 9 (2021-2025).

### ແຜນງານການມີສ່ວນຮ່ວມຂອງປະຊາຊົນ ຕໍ່ວຽກງານການປົກຄອງທີ່ດີ ແລະ ສ້າງລັດທີ່ປົກຄອງດ້ວຍກົດໝາຍ (CEGGA) ສປປ ລາວ

| | |
|---|---|
| **ຊື່ແຜນງານ** | ແຜນງານການມີສ່ວນຮ່ວມຂອງປະຊາຊົນ ຕໍ່ວຽກງານການປົກຄອງທີ່ດີ ແລະ ສ້າງລັດທີ່ປົກຄອງດ້ວຍກົດໝາຍ (CEGGA) |
| **ປະເທດຜູ້ຮ່ວມງານ** | ສປປ ລາວ |
| **ງົບປະມານ** | 30 ລ້ານ ເອີໂຣ<br>(ໄລຍະ I: 19.5 ລ້ານເອີໂຣ; ໄລຍະ II: 10.5 ລ້ານເອີໂຣ) |
| **ໄລຍະເວລາ** | ມັງກອນ 2017 - ຕຸລາ 2025 (ໄລຍະ II: 11/22-10/25) |
| **ຜູ້ໃຫ້ທຶນ** | ອົງການເພື່ອການພັດທະນາ ແລະ ການຮ່ວມມືຂອງສະວິດເຊີແລນ (SDC), ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາຂອງສະຫະພັນເຢຍລະມັນ (BMZ); ສະຫະພາບເອີຣົບ (EU) |
| **ຜູ້ຈັດຕັ້ງປະຕິບັດໂຄງການ** | ຫ້ອງການ GIZ ປະຈຳ ສປປ ລາວ ຫລື<br>Deutsche Gesellschaft für Internationale Zusammenarbeit (GIZ) GmbH |
| **ຜູ້ຮ່ວມງານ** | ກະຊວງພາຍໃນ; ກະຊວງຍຸຕິທຳ; ສະພາແຫ່ງຊາດ; ແຂວງຄຳມ່ວນ ແລະ ແຂວງຫຼວງພະບາງ (ຫ້ອງວ່າການປົກຄອງແຂວງ; ພະແນກພາຍໃນ ແລະ ພະແນກຍຸຕິທຳແຂວງ; ສະພາປະຊາຊົນແຂວງ); ຄະນະກຳມະການປະສານງານອົງການຈັດຕັ້ງທາງສັງຄົມລາວ |
| **ຄາດໝາຍລວມ** | ການພົວພັນພາຍໃນ ລັດ-ປະຊາຊົນ ໄດ້ຮັບການສົ່ງເສີມເພື່ອການພັດທະນາແຫ່ງຊາດ |

Implemented by
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

## ພາບລວມ

ລັດຖະບານແຫ່ງ ສປປ ລາວ ໄດ້ສຸມໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ການປົກຄອງທີ່ດີ, ໂດຍແນໃສ່ ການສ້າງທີ່ປົກຄອງດ້ວຍກົດໝາຍ ແລະ ຫຼັກປະຊາທິປະໄຕ. ບັນດາຜົນສຳເລັດ ແມ່ນມາຈາກການປັບປຸງລັດຖະທຳມະນູນ, ການສ້າງກົດໝາຍໃໝ່ ແລະ ດຳລັດຕ່າງໆ, ເພື່ອໃຫ້ແທດເໝາະກັບຊີວິດການເປັນຢູ່ຂອງປະຊາຊົນ. ປະຊາຊົນ ແລະ ອົງການຈັດຕັ້ງສັງຄົມ ຮັບຮູ້ເຖິງສິດ ແລະ ເປັນສ່ວນໜຶ່ງໃນຂະບວນການພັດທະນາປະເທດຊາດ. ສະມາຊິກສະພາ ແລະ ພະນັກງານ-ລັດຖະກອນ ຮັບຮູ້ເຖິງພາລະບົດບາດ ແລະ ເພີ່ມທະວີການຮ່ວມມື ແລະ ການມີສ່ວນຮ່ວມຂອງປະຊາຊົນ, ເພື່ອຮັບປະກັນການພັດທະນາແບບຍືນຍົງ ແລະ ມີສ່ວນຮ່ວມ. ນີ້ເປັນປະຫວັດຄວາມເປັນມາຂອງແຜນງານ CEGGA ແລະ ໄດ້ເລີ່ມຈັດຕັ້ງປະຕິບັດໃນປີ 2017; ແຜນງານ CEGGA ໄລຍະ II ເລີ່ມຈັດຕັ້ງປະຕິບັດແຕ່ເດືອນ ພະຈິກ 2022 ເປັນຕົ້ນມາ.

## ແນວທາງ ແລະ ກິດຈະກຳ

ແຜນງານ CEGGA ໄລຍະທຳອິດ (2017-2022) ໄດ້ອອກແບບໂດຍມີຈຸດປະສົງເປົ້າໝາຍກວ້າງຂວາງ, ເພື່ອເຮັດໃຫ້ມີຈຸດເລີ່ມຕົ້ນທີ່ຫຼາກຫຼາຍໃນການເຈລະຈາ ແລະ ການຮ່ວມມືຂອງຄູ່ຮ່ວມພັດທະນາທີມງານເອີຣົບ ກັບ ລັດຖະບານ ແຫ່ງ ສປປ ລາວ ກ່ຽວກັບສິດທິມະນຸດ, ການສ້າງລັດທີ່ປົກຄອງດ້ວຍກົດໝາຍ, ການປົກຄອງທີ່ດີ ແລະ ການມີສ່ວນຮ່ວມຂອງປະຊາຊົນ.

ເພື່ອເພີ່ມທະວີການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາປະເທດຊາດ, ແຜນງານ CEGGA ແນໃສ່ການປັບປຸງສະພາບແວດລ້ອມ ແລະ ຄວາມອາດສາມາດໃຫ້ແກ່ອົງການຈັດຕັ້ງສັງຄົມ, ສ້າງຄວາມເຂັ້ມແຂງໃຫ້ແກ່ສະພາໃນການປະຕິບັດພາລະບົດບາດ ການເປັນຕົວແທນຂອງປະຊາຊົນ, ການສ້າງນິຕິກຳ ແລະ ການຕິດຕາມກວດກາພາກລັດ ຂັ້ນສູນກາງ ແລະ ຂັ້ນແຂວງ, ພ້ອມທັງເພີ່ມທະວີການຈັດຕັ້ງປະຕິບັດການສ້າງລັດທີ່ປົກຄອງດ້ວຍກົດໝາຍ ແລະ ສິດທິມະນຸດ. GIZ ນຳໃຊ້ຫຼາກຫຼາຍເຄື່ອງມື ແລະ ຮູບແບບການຮ່ວມມືດ້ານວິຊາການເພື່ອພັດທະນາຄວາມອາດສາມາດໃຫ້ແກ່ຄູ່ຮ່ວມງານ ໃນລະດັບບຸກຄົນ, ອົງກອນ ແລະ ສັງຄົມ (ການຮ່ວມມື ແລະ ລະບົບ), ລວມທັງ ການຝຶກອົບຮົມ, ສະໜັບສະໜູນການພັດທະນາດ້ານອົງກອນ, ສະໜັບສະໜູນການຈັດກິດຈະກຳ, ອຳນວຍຄວາມສະດວກກອງປະຊຸມປຶກສາຫາລືຫຼາຍຝ່າຍ, ສົ່ງເສີມການເຮັດວຽກຮ່ວມກັນຂອງສະຖານບັນ, ໃຫ້ຄຳແນະນຳ ແລະ ສະໜອງທຶນ. ຄູ່ຮ່ວມງານຫຼັກຂອງແຜນງານ CEGGA ລວມມີ ອົງການຊ່ວຍເຫຼືອທາງດ້ານການສຶກສາກົດໝາຍໃຫ້ແກ່ຊຸມຊົນຂອງບັນດາປະເທດໃນອາຊີຕາເວັນອອກສຽງໃຕ້ (BABSEACLE), ສູນພັດທະນາ ແລະ ສິ່ງແວດລ້ອມຂອງມະຫາໄລເບີນ (CDE), ອົງການ Cord, ອົງການ Helvetas ແລະ ມູນນິທິເວສມິນສເຕີ (WFD).

ແຜນງານ CEGGA ໄລຍະ II (2022-2025) ມີຈຸດປະສົງເພື່ອປັບປຸງການມີສ່ວນຮ່ວມຂອງປະຊາຊົນ ແລະ ພາກລັດໃນການພັດທະນາປະເທດໂດຍແນໃສ່ການມີສ່ວນຮ່ວມ ແລະ ຈະສືບຕໍ່ປະກອບສ່ວນໂດຍສຸມໃສ່ ສອງໃນສາມ ຂົງເຂດບຸລິມະສິດຂອງຍຸດທະສາດຂອງທີມງານເອີຣົບໃນ ສປປ ລາວ: ສົ່ງເສີມການປົກຄອງທີ່ດີ, ສິດທິມະນຸດ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ແລະ ປະກອບເປັນສ່ວນໜຶ່ງໃນແຜນງານລິເລີ່ມສີຂຽວຂອງທີມງານເອີຣົບເປັນຜູ້ຊຸກຍູ້ວຽກງານດັ່ງກ່າວ, ໂດຍຜ່ານການສະໜອງທຶນຊ່ວຍເຫຼືອລ້າຂະໜາດນ້ອຍໃຫ້ແກ່ອົງການຈັດຕັ້ງສັງຄົມ, ພ້ອມທັງນຳສະເໜີຜົນງານດ້ານນະວັດຕະກຳໃໝ່ໃນການຈັດຕັ້ງປະຕິບັດວຽກງານການປົກຄອງທີ່ດີໃນຂົງເຂດສິ່ງແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ, ລວມທັງປ່າໄມ້ ແລະ ການປ່ຽນແປງ ສະພາບດິນຟ້າອາກາດ. ຈຸດປະສົງຂອງແຜນງານ CEGGA ໄລຍະ II ຈະດຳເນີນງານຜ່ານ 3 ອົງປະກອບ ໃນລະດັບສູນກາງ ແລະ 2 ແຂວງຄູ່ຮ່ວມງານ: ແຂວງຄຳມ່ວນ ແລະ ຫຼວງພະບາງ:

1) ກອງປະຊຸມປຶກສາຫາລືລະຫວ່າງ ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງລັດ, ເຊິ່ງໄດ້ຮັບການປັບປຸງຢ່າງຕໍ່ເນື່ອງເປັນປະຈຳ ແລະ ມີປະສິດທິຜົນ.
2) ຂະບວນການຕົກລົງບັນຫາຂອງສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ໂດຍແນໃສ່ປະຊາຊົນ ຢູ່ສອງແຂວງເປົ້າໝາຍໄດ້ຮັບການຈັດຕັ້ງປະຕິບັດ.
3) ການເຂົ້າເຖິງຄວາມຍຸຕິທຳ ໄດ້ຮັບການປັບປຸງ.



ສົ່ງເສີມການນຳໃຊ້ດິຈິຕອລເພື່ອການສື່ສານກັບຊຸມຊົນທີ່ດ້ອຍໂອກາດໃນແຂວງຈຳປາສັກ-ຮູບພາບ: @GIZ/Phoonsab

### 1. ປັບປຸງກອງປະຊຸມປຶກສາຫາລືລະຫວ່າງ ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງລັດ

ອົງການຈັດຕັ້ງສັງຄົມໄດ້ມີການປະກອບສ່ວນທີ່ສຳຄັນເຂົ້າໃນການພັດທະນາໂດຍແນໃສ່ການມີສ່ວນຮ່ວມ. ຫຼາຍອົງກອນໄດ້ເຄື່ອນໄຫວໃນຂະແໜງສັງຄົມ, ຊ່ວຍເຫຼືອກຸ່ມຜູ້ດ້ອຍໂອກາດ ແລະ ສົ່ງເສີມການປະຕິບັດວຽກງານກະສິກຳ ຫຼື ສິ່ງແວດລ້ອມແບບຍືນຍົງ.

ຫ້ອງການ GIZ ໄດ້ສະໜັບສະໜູນ ກະຊວງພາຍໃນ ແລະ ບັດດາອົງການຈັດຕັ້ງລັດໃນການຈັດຕັ້ງປະຕິບັດກອບລະບຽບກົດໝາຍ, ເພື່ອອຳນວຍຄວາມສະດວກໃຫ້ແກ່ອົງການຈັດຕັ້ງສັງຄົມໃນການມີສ່ວນຮ່ວມ ແລະ ລົງທະບຽນ, ໄດ້ມີການສ້າງຖານຂໍ້ມູນ ແລະ ເວັບໄຊທ໌ທີ່ມີຂໍ້ມູນກ່ຽວກັບຂະບວນການລົງທະບຽນ, ໄດ້ມີການເຜີຍແຜ່ດຳລັດວ່າດ້ວຍສະມາຄົມ (ດຳລັດເລກທີ 238), ໂດຍການຈັດຝຶກອົບຮົມກ່ຽວກັບການນຳໃຊ້ຂັ້ນຕອນການດຳເນີນງານມາດຕະຖານການຂຶ້ນທະບຽນຂອງອົງການຈັດຕັ້ງສັງຄົມໃຫ້ແກ່ພະນັກ

ງານລັດຫຼາຍກວ່າ 1,400 ຄົນ ຢູ່ໃນ 18 ແຂວງທົ່ວປະເທດ. ການຝຶກອົບຮົມນີ້ ຍັງໄດ້ຍົກລະດັບຄວາມເຂົ້າໃຈກ່ຽວກັບບົດບາດ ແລະ ສິ່ງທ້າທາຍ, ພ້ອມທັງ ແລກປ່ຽນໃນ 5 ເວທີພາກພື້ນ ແລະ ແຂວງ ເພື່ອປຶກສາຫາລືລະຫວ່າງ ຜູ້ຕາງໜ້າອົງການຈັດຕັ້ງສັງຄົມ ແລະ ພະນັກງານພາກລັດ ຈຳນວນຫຼາຍຮ້ອຍຄົນ ກ່ຽວກັບປະສົບການໃນການຈັດຕັ້ງປະຕິບັດກ່ຽວກັບກອບລະບຽບການຂອງອົງການຈັດຕັ້ງສັງຄົມ. ພາຍຫລັງການຈັດຕັ້ງປະຕິບັດແຜນງານ, ໄລຍະເວລາການລົງທະບຽນໂດຍສະເລ່ຍຂອງອົງການຈັດຕັ້ງທາງສັງຄົມໄດ້ ຫຼຸດລົງຈາກ 595 ວັນ (ວັນລັດຖະການ) ໃນປີ 2018 ເຫລືອເປັນ 151 ມື້ (ວັນລັດຖະການ) ໃນປີ 2022.

ແຜນງານ CEGGA ໄດ້ຮ່ວມມືກັບຄະນະກຳມະການປະສານງານສັງຄົມ, ອົງການຈັດຕັ້ງສັງຄົມລາວ (LCCC) ເພື່ອສ້າງຄວາມເຂັ້ມແຂງທາງດ້ານການປະສານງານໃຫ້ແກ່ອົງການຈັດຕັ້ງສັງຄົມ, ເພື່ອການມີສ່ວນຮ່ວມໃນການປຶກສາຫາລືກັບອົງການຈັດຕັ້ງລັດ ແລະ ບັດດາອົງການຈັດຕັ້ງອື່ນໆ, ແລະ ຈັດຕັ້ງກິດຈະກຳເຜີຍແຜ່ຕ່າງໆ ,ເຊັ່ນ: ງານວາງສະແດງຜົນງານ ແລະ ຜະລິດຕະພັນຂອງອົງການຈັດຕັ້ງສັງຄົມ. ຫ້ອງການ GIZໄດ້ສະໜັບສະໜູນການຈັດກອງປະຊຸມປະຈຳປີລະຫວ່າງອົງການຈັດຕັ້ງສັງຄົມລາວ ແລະ ອົງການຈັດຕັ້ງລັດ ນັບແຕ່ປີ 2017 ຫາ 2022, ອຳນວຍຄວາມສະດວກການນຳສະເໜີແນວທາງນະວັດຕະກຳແບບໃໝ່ ເຊິ່ງເປັນການຈັດກອງປະຊຸມປະຈຳປີຮ່ວມກັນລະຫວ່າງຄະນະປະສານງານອົງການຈັດຕັ້ງສັງຄົມລາວ (LCCC) ແລະ ລັດຖະບານ, ເພື່ອເຮັດໃຫ້ມີການຮ່ວມມືກັນຫຼາຍຂຶ້ນລະຫວ່າງສອງພາກສ່ວນ. ນອກຈາກນັ້ນ, ຫ້ອງການ GIZ ຍັງໄດ້ສະໜັບສະໜູນແຜນພັດທະນາ 5 ປີ ຂອງອົງການຈັດຕັ້ງສັງຄົມລາວ ແລະ ການສ້າງຕັ້ງກຸ່ມຂອງຂະແໜງວຽກອົງການຈັດຕັ້ງສັງຄົມ. ໃນການຮ່ວມມືໃນວຽກອື່ນໆ, ແຜນງານ CEGGA ກໍ່ຍັງສະໜັບສະໜູນການເຂົ້າຮ່ວມຂອງອົງການຈັດຕັ້ງສັງຄົມໃນກອງປະຊຸມໂຕະມົນກ່ຽວກັບການຈັດຕັ້ງປະຕິບັດແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ເວທີປຶກສາຫາລືປະຊາຄົມອາຊຽນ.

ມາຮອດປີ 2022, ແຜນງານ CEGGA ໄດ້ສະໜອງທຶນຊ່ວຍເຫຼືອລ້າຂະໜາດນ້ອຍໃຫ້ແກ່ 37 ອົງການຈັດຕັ້ງສັງຄົມ ໃນການຈັດຕັ້ງປະຕິບັດໂຄງການພັດທະນາແບບຍືນຍົງເປັນຈຳນວນ 35 ໂຄງການ, ເຊິ່ງແບ່ງອອກເປັນ 5 ວຽກຂະແໜງການ ແລະ 4 ຫົວຂໍ້ໃນວຽກການປົ່ນອ້ອມ, ພ້ອມທັງສະຫນັບສະຫນູນໂຄງການຕອບໂຕ້ຕໍ່ພະຍາດອັກເສບປອດ ຫລື Covid-19, ເຊິ່ງເປັນການຈັດຕັ້ງປະຕິບັດຮ່ວມກັນຂອງ 3 ອົງກອນ. ໂດຍທົ່ວໄປແລ້ວ, ວຽກງານທາງດ້ານບົດບາດຍິງຊາຍ ແລະ ການມີສ່ວນຮ່ວມຂອງສັງຄົມ ແມ່ນໄດ້ຖືກລວມເຂົ້າໃນການຈັດຕັ້ງປະຕິບັດໃນໂຄງການຂອງອົງ

ການຈັດຕັ້ງສັງຄົມໃນທຸກລະດັບ. ມີຈຳນວນ 12 ໂຄງການທີ່ໄດ້ຮັບທຶນຈາກແຜນງານ CEGGA ແມ່ນສຸມໃສ່ວຽກກັບເພດຍິງ ຫຼື ກຸ່ມຜູ້ ດ້ອຍໂອກາດເປັນຫຼັກ, ເຊັ່ນ: ຄົນພິການ. ຈຳນວນຫຼາຍກວ່າ 350 ຄົນແມ່ນໄດ້ຮັບຜົນປະໂຫຍດຈາກ 40 ກິດຈະກຳຂອງການຝຶກອົບຮົມ ແລະ ແລກປ່ຽນຮຽນຮູ້ໃນແຕ່ລະໄລຍະ, ສະໜັບສະໜູນອົງການຈັດຕັ້ງສັງຄົມໃນການພັດທະນາດ້ານອົງກອນ. ໂຄງການຊ່ວຍເຫຼືອລ້າຂະໜາດນ້ອຍຂອງອົງການຈັດຕັ້ງສັງຄົມໄດ້ເຂົ້າເຖິງບັນດາຊຸມຊົນຢູ່ທ້ອງຖິ່ນຫຼາຍກວ່າ 200 ບ້ານຢູ່ໃນບັນດາ 15 ແຂວງ ແລະ ສ້າງຜົນປະໂຫຍດທີ່ເຫັນໄດ້ຊັດເຈນໃຫ້ແກ່ກຸ່ມເພດຍິງຫຼາຍກວ່າ 5,000 ຄົນ, ຊົນເຜົ່າ 2,000 ຄົນ, ກຸ່ມຄົນຫຼາກຫຼາຍທາງເພດ 200 ຄົນ ແລະ ຄົນພິການ 100 ຄົນ. ເພື່ອເສີມສ້າງຄວາມເຂົ້າໃຈໃນບົດບາດທີ່ມີຄຸນຄ່າຂອງອົງການຈັດຕັ້ງສັງຄົມ,ອົງການຈັດຕັ້ງສັງຄົມໄດ້ສະແດງໃຫ້ເຫັນການປະກອບສ່ວນຂອງພວກເຂົາໃນການປົກຄອງທີ່ດີ ແລະ ການພັດທະນາແບບຍືນຍົງຢູ່ໃນສອງກິດຈະກຳກໍ່ຄືຈຳນວນ2ຄັ້ງໃນລະ/ດັບສູນກາງ ແລະ 3 ຄັ້ງໃນລະດັບແຂວງ.

ໃນໄລຍະ II ຂອງ ແຜນງານ CEGGA, ຈຳນວນອົງການຈັດຕັ້ງສັງຄົມທີ່ປະກອບສ່ວນເຂົ້າໃນກອງປະຊຸມປຶກສາຫາລືຫລາຍພາກສ່ວນໄດ້ເພີ່ມຂຶ້ນ. ຍ້ອນການຊ່ວຍເຫຼືອດ້ານທຶນ ແລະ ການສະໜັບສະໜູນເພື່ອພັດທະນາຂີດຄວາມສາມາດຂອງອົງການ, ຈຳນວນໂຄງການ ຂອງອົງການຈັດຕັ້ງສັງຄົມທີ່ຈັດຕັ້ງປະຕິບັດໄດ້ມີການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ການສ້າງປະສິບການ ແລະ ການສ້າງຄວາມເຂົ້າໃຈໃນການປຶກສາຫາລື ດ້ານນະໂຍບາຍ, ຄຸນນະພາບການສະໜອງຂໍ້ມູນທາງດ້ານວິຊາການ / ບັນຫາສິ່ງແວດລ້ອມ, ຄວາມສະເໝີພາບ ຍິງ-ຊາຍ, ແລະ ລວມເຖິງກຸ່ມຜູ້ທີ່ດ້ອຍໂອກາດກໍ່ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລືລະຫວ່າງ ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງລັດ. ກອງປະຊຸມປຶກສາຫາລືລະຫວ່າງອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງລັດ ແມ່ນຈະເພີ່ມຂຶ້ນໃນແຕ່ລະປີ. ໃນເດືອນ ພຶດສະພາ 2023, ແຜນງານ CEGGA ໄດ້ສະໜອງທຶນຊ່ວຍເຫຼືອລ້າຂະໜາດນ້ອຍຈຳນວນ 22 ໂຄງການໃນ 5 ຂະແໜງການບຸລິມະສິດ, ເຊິ່ງຈັດຕັ້ງປະຕິບັດໂດຍ 23 ອົງການຈັດຕັ້ງສັງຄົມຢູ່ໃນ 11 ແຂວງ.

## 2. ຂະບວນການຕົກລົງບັນຫາທີ່ແນໃສ່ຂັ້ນຕອນຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໂດຍອີງໃສ່ຄຳເຫັນຂອງປະຊາຊົນເປັນຫລັກ

ສະພາແຫ່ງຊາດ ເປັນອົງການສູງສຸດແຫ່ງອຳນາດລັດຂອງ ສປປ ລາວ ຄຽງຄູ່ກັບ ສະພາປະຊາຊົນຂັ້ນແຂວງ 18 ແຂວງ ເປັນຕົວແທນແຫ່ງ ສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ, ມີພາລະບົດບາດໃນການຮັບຮອງເອົາ ນິຕິກຳ ແລະ ຕິດຕາມກວດກາບັນດາອົງການຈັດຕັ້ງລັດ. ໃນລະຫວ່າງປີ 2017 ຫາ 2022, ແຜນງານ CEGGA ໄດ້ສະໜັບສະໜູນ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຈັດຕັ້ງປະຕິບັດກິດຈະກຳສ້າງຂີດຄວາມສາມາດຫຼາຍກວ່າ 180 ກິດຈະກຳ ໃນຂົງເຂດຕ່າງໆເຊັ່ນ: ຕິດຕາມກວດກາການປະຕິບັດງົບປະມານແຫ່ງລັດ ແລະ ການປະຕິບັດກົດໝາຍ; ສ້າງນິຕິກຳທີ່ສອດຄ່ອງກັບຄວາມຕ້ອງການຂອງປະຊາຊົນ; ແລະ ພົບປະກັບປະຊາຊົນ ແລະ ພາກສ່ວນກ່ຽວຂ້ອງອື່ນໆ.



ການພົບປະກັບປະຊາຊົນ ຮູບພາບ:©ສະພາແຫ່ງຊາດ/ກົມສື່ມວນຊົນ – ຮູບພາບ: ©GIZ CEGGA

ແຜນງານ CEGGA ເປັນແຜນງານທຳອິດທີ່ສະໜັບສະໜູນ ສະພາປະຊາຊົນຂັ້ນແຂວງ 18 ແຂວງ ໃນຂອບເຂດທົ່ວປະເທດ. ການປະເມີນການຈັດຕັ້ງປະຕິບັດວຽກງານຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ I ຍົກໃຫ້ເຫັນຍຸດທະສາດພ້ອມທັງວິທີການທີ່ເໝາະສົມໃນການພັດທະນາຄວາມສາມາດ. ການຖ່າຍທອດຄວາມຮູ້ ແລະ ທັກສະຈາກ ສະພາແຫ່ງຊາດ ໃຫ້ແກ່ສະພາປະຊາຊົນຂັ້ນແຂວງ (quick wins). ສະໜັບສະໜູນສະພາປະຊາຊົນຂັ້ນແຂວງ ໃຫ້ສາມາດປະຕິບັດ ວຽກງານຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ I. ເຄື່ອງມືການມີສ່ວນຮ່ວມຂອງປະຊາຊົນ (PET) ໄດ້ຮັບການແນະນຳໃນຂະບວນການ ພົບປະກັບປະຊາຊົນ, ຕິດຕາມກວດກາ ແລະ ການແກ້ໄຂຄຳຮ້ອງທຸກ, ເຊິ່ງໄດ້ທົດລອງນຳໃຊ້ຢູ່ສອງແຂວງ ແລະ ສະຖາບັນຕ່າງໆ, ເພື່ອປັບປຸງ ແລະ ນຳໃຊ້ໃຫ້ແທດເຫມາະໃນຂອບເຂດທົ່ວປະເທດ. ແຜນງານ CEGGA ສະຫນັບສະຫນູນສະພາປະຊາຊົນຂັ້ນແຂວງ ປັບປຸງລະບົບການແກ້ໄຂ ຄຳຮ້ອງທຸກ,ເຊິ່ງເປັນສາເຫດເຮັດໃຫ້ມີຄຳຮ້ອງທຸກໃນຂັ້ນສະພາປະຊາຊົນຂັ້ນແຂວງເພີ່ມຂຶ້ນຈາກທີ່ບໍ່ມີຄຳຮ້ອງທຸກໃນປີ 2018 ມາເປັນຫຼາຍກວ່າ 1,300 ຄຳຮ້ອງທຸກທີ່ກຳລັງໄດ້ຮັບການພິຈາລະນາ ແລະ ໃນປີ 2022, ຫຼາຍກວ່າ 60% ຂອງບັນຫາທີ່ປະຊາຊົນຍົກຂຶ້ນໄດ້ຖືກແກ້ໄຂ.

ແຜນງານ CEGGA ໄດ້ສະໜັບສະໜູນ ສະພາແຫ່ງຊາດ ໃນການພັດທະນາລະບົບຄຸ້ມຄອງຄຳຮ້ອງທຸກແບບດິຈິຕອນ. ສະມາຊິກ ແລະ ພະນັກງານ ສະພາປະຊາຊົນຂັ້ນແຂວງ ຈຳນວນ 1,450 ທ່ານ ໄດ້ເຂົ້າຮ່ວມຝຶກອົບຮົມກ່ຽວກັບການຕິດຕາມກວດກາແຜນງົບປະມານແຫ່ງລັດ ແລະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ ແລະ ສັງຄົມ. ຜົນຂອງການປະເມີນສະແດງໃຫ້ເຫັນວ່າ 81% ຂອງຜູ້ເຂົ້າຮ່ວມໄດ້ຄະແນນ ≥80% ໄດ້ຮັບຄວາມຮູ້ຈາກການຝຶກອົບຮົມ.

ແຜນງານ CEGGA ໄດ້ປະກອບສ່ວນເຂົ້າໃນການກະກຽມຄຳ ຖາມໃຫ້ແກ່ສະມາຊິກສະພາແຫ່ງຊາດໃນກອງປະຊຸມສະພາສະໄໝສາມັນໂດຍສະຫນອງຂໍ້ມູນທາງດ້ານວິຊາການໃນຫົວຂໍ້ນິຕິກຳຕ່າງໆ ເຊັ່ນ: ສານປົກຄອງ, ກົດໝາຍ ວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ, ກົດໝາຍວ່າດ້ວຍຄຳຮ້ອງທຸກ, ຂັ້ນຕອນການພິຈາລະນາໂຄງການຂະໜາດໃຫ່ຍ. ຜ່ານການເຮັດວຽກຮ່ວມມືກັບສະມາຊິກສະພາເພດຍິງ, ໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາເພດຍິງຂັ້ນແຂວງ ຈຳນວນ 46 ທ່ານ ກ່ຽວກັບວິທີການໂຄສະນາ, ເຜີຍແຜ່ວຽກງານບົດບາດຍິງ-ຊາຍ. ສະມາຊິກສະພາເພດຍິງຂັ້ນແຂວງ ຈຳນວນ 130 ທ່ານ ໄດ້ເຂົ້າຮ່ວມຝຶກອົບຮົມຫົວຂໍ້ສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (CEDAW) ລວມທັງຕ້ານການຄ້າມະນຸດ, ເງື່ອນໄຂຜູ້ແຮງງານເພດຍິງ, ສະໜັບສະໜູນສະພາແຫ່ງຊາດ ແລະ ສະຫະພັນແມ່ຍິງລາວຈັດກອງປະຊຸມທາບທາມຮ່າງກົດໝາຍ ວ່າດ້ວຍຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ໃຫ້ຄຳເຫັນທາງດ້ານວິຊາການ ເພື່ອຮ່າງຄູ່ມືການຕິດຕາມກວດກາງົບປະມານທີ່ຕິດພັນກັບຄວາມສະເໝີພາບລະຫວ່າງບົດບາດຍິງ-ຊາຍ ແລະ ແນະນຳວິທີການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ.

ໃນໄລຍະ II ຂອງແຜນງານ CEGGA, ການາທິການ ສະພາແຫ່ງຊາດມີເປົ້າໝາຍຈະນຳໃຊ້ກົນໄກທີ່ມີຢູເພື່ອຕອບສະໜອງຂໍ້ມູນຂ່າວສານທີ່ຕ້ອງການ ເພື່ອຄົ້ນຄວ້າຂໍ້ມູນຫົວຂໍ້ສະເພາະຈາກຜູ້ຊ່ຽວຊານ, ອົງການຈັດຕັ້ງສັງຄົມ ແລະ ການນຳສະເໜີບົດຮຽນຂັ້ນແຂວງ. ຈຳນວນຮ່າງນິຕິກຳທີ່ໄດ້ຕັ້ງຄຳຖາມໃນລະຫວ່າງກອງປະຊຸມສະໄໝສາມັນທີ່ແຜນງານ CEGGA ໃຫ້ຄຳຄິດເຫັນທາງດ້ານວິຊາການຕິດພັນກັບບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ ແມ່ນເພີ່ມຂຶ້ນ. ຄູ່ມືຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍຈະນຳໃຊ້ເຂົ້າໃນຂະບວນການສ້າງນິຕິກຳຂອງສະພາແຫ່ງຊາດ. ສະພາປະຊາຊົນຂັ້ນແຂວງ ຈະຕິດຕາມຄຳຄິດເຫັນຂອງປະຊາຊົນໃນຂະບວນການມີສ່ວນຮ່ວມຂອງປະຊາຊົນ ຜ່ານການເຂົ້າຮ່ວມຝຶກອົບຮົມການນຳໃຊເຄື່ອງມືຢ່າງມີປະສິດທິພາບກ່ຽວກັບບັນຫາທີ່ຕິດພັນກັບບົດບາດຍິງ-ຊາຍ. ສະມາຊິກເພດຍິງ ແລະ ພະນັກງານສະພາປະຊາຊົນຂັ້ນແຂວງ ຢູ່ໃນບັນດາແຂວງຄູ່ຮ່ວມງານ ຈະຮັບຮູ້ບົດບາດຂອງຕົນໃນທາງບວກຫຼາຍຂຶ້ນ.




Super Heroes ຊ່ວຍເຫຼືອດ້ານກົດໝາຍ: CEGGA ໄດ້ໃຊ້ນະວັດຕະກຳໃໝ່ໃນການສ້າງວິດີໂອກະຕູນເລື່ອງສັ້ນ ເພື່ອສົ່ງເສີມໃຫ້ປະຊາຊົນສາມດການເຂົ້າເຖິງຂໍ້ມູນດ້ານທາງກົດໝາຍ ໄດ້ຢ່າງງ່າຍດາຍ ແລະ ເຂົ້າໃຈໄດ້ງ່າຍໃນຮູບແບບທີ່ຈູງໃຈ ນຳໃຊ້– ຮູບພາບ: ©GIZ CEGGA

## 3. ການເຂົ້າເຖິງຄວາມຍຸຕິທຳຂອງປະຊາຊົນ

ກ່ຽວກັບວຽກງານການເຊື່ອມໂຍງພັນທະສິດທິມະນຸດສາກົນເຂົ້າໃນລະບົບກົດໝາຍພາຍໃນ, ຫ້ອງການ GIZ ໄດ້ຮ່ວມມືກັບກະຊວງການຕ່າງປະເທດ ແລະ ກະຊວງຍຸຕິທຳໃນການພັດທະນາ ແລະ ເຜີຍແຜ່ບົດຄົ້ນຄວ້າວິເຄາະຊ່ອງຫວ່າງຂອງກົດໝາຍລາວທຽບໃສ່ກົດໝາຍສາກົນຈຳນວນ 5 ສະບັບ ແລະ ໄດ້ມີການເຜີຍແຜ່ໃຫ້ກັບບັນດາອົງຈັດຕັ້ງລັດ ເພື່ອຮັບປະກັນຄວາມສອດຄ່ອງຂອງລະບົບກົດໝາຍ. ແຜນງານ CEGGA ສະໜັບສະໜູນຈັດກອງປະຊຸມປິ່ນອ້ອມ ຈຳນວນ 6 ຄັ້ງ ພາຍໃຕ້ກອງປະຊຸມສົນທະນາລະດັບວິຊາການດ້ານສິດສິດມະນຸດ ລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ. ຈາກຜົນການປະເມີນຜົນຈາກການຝຶກອົບຮົມເຫັນວ່າຫຼາຍກວ່າ 80% ຂອງສະມາຊິກ ສພຊ ຈຳນວນ 325 ທ່ານໄດ້ມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບພັນທະສິດທິມະນຸດສາກົນຫລາຍຂຶ້ນ.

ກ່ຽວກັບວຽກງານການປັບປຸງລະບົບກົດໝາຍ ແລະ ກອບທາງດ້ານນະໂຍບາຍເພື່ອປະກອບສ່ວນໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ ແລະ ການເຂົ້າເຖິງຄວາມຍຸຕິທຳນັ້ນ ແຜນງານ CEGGA ໄດ້ໃຫ້ການສະນັບສະໜູນທາງດ້ານວິຊາການເພື່ອຮ່າງກົດໝາຍ ແລະ ດຳລັດຕ່າງໆ ເຊັ່ນ: ກົດໝາຍວ່າດ້ວຍ ການຊົດເຊີຍຄ່າເສຍຫາຍຈາກລັດ, ກົດໝາຍປົກຄອງ, ກົດໝາຍວ່າດ້ວຍ ການສ້າງນິຕິກຳ, ດຳລັດວ່າດ້ວຍ ການໂຄສະນາ ແລະ ເຜີຍແຜ່ກົດໝາຍ ແລະ ດຳລັດວ່າດ້ວຍ ການຊ່ວຍເຫຼືອດ້ານກົດໝາຍ ແລະ ສະໜອງຜະລິດຕະພັນຮັບໃຊ້ວຽກງານປູກຈິດສຳນຶກກົດໝາຍທີ່ເຂົ້າໃຈງ່າຍໃຫ້ທຸກເມືອງໃນຂອບເຂດທົ່ວປະເທດ.

ນອກຈາກນີ້, ຍັງໄດ້ມີການຈັດກອງສຳມະນາວິທະຍາສາດກ່ຽວກັບການປົກຄອງທີ່ດີ ແລະ ການຄຸ້ມຄອງລັດຄຸ້ມຄອງສັງຄົມດ້ວຍກົດໝາຍໃຫ້ແກ່ການນຳລະດັບສູງຈຳນວນຫລາຍກວ່າ 200 ທ່ານ ແລະ ສ້າງບົດຄົ້ນຄວ້າສົມທຽບກ່ຽວກັບການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍກັບ ເກົ້າປະເທດ. ແຜນງານ CEGGA ໄດ້ຮ່ວມມືກັບສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ (ສມປຊ) ສ້າງລະບົບການຮຽນການສອນ ກ່ຽວກັບການສ້າງລັດທີ່ປົກຄອງດ້ວຍກົດໝາຍ ແລະ ດຳເນີນການຝຶກອົບຮົມໃຫ້ຄູອາຈານຂອງ ສມປຊ ຈາກທຸກແຂວງ. ຄູອາຈານຂອງສະຖາບັນຍຸຕິທຳແຫ່ງຊາດ (ສຍຊ) ຈຳນວນ 79 ທ່ານທີ່ໄດ້ຮັບການຝຶກອົບຮົມ, ໃນນັ້ນເຫັນໄດ້ວ່າ 76% ໄດ້ຮັບການຍົກລະດັບທັດສະການສອນທີ່ເນັ້ນໃສ່ການປະຕິບັດໂຕຈິງ. ສູນບໍລິການກົດຫມາຍເພື່ອປະຊາຊົນ (CLE) ໄດ້ຈັດກອງປະຊຸມ, ສຳມະນາ, ຝຶກອົບຮົມ ເພື່ອສ້າງຄວາມສາມາດໃຫ້ແກ່ຄູອາຈານ ແລະ ນັກສຶກສາຂອງ ສຍຊ ຈຳນວນ 75 ຄັ້ງ ແລະ ມີຜູ້ເຂົ້າຮ່ວມຈຳນວນ 5,600 ຄົນໄດ້ຮັບຜົນປະໂຫຍດຈາກການດຳເນີນກິດຈະກຳດັ່ງກ່າວ. ຍິ່ງໄປກວ່ານັ້ນ, ຍັງໄດ້ມີການພັດທະນາຍຸດທະສາດຄວາມສະດຸ້ງໄວຕໍ່ບົດບາດຍິງ-ຊາຍໃນວຽກງານການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແລະ ໄດ້ຝຶກອົບຮົມໃຫ້ຄູຝຶກຈຳນວນ 59 ທ່ານຈາກທຸກແຂວງໃນທົ່ວປະເທດ.

ໃນໄລຍະ II ຂອງແຜນງານ CEGGA, ຈະໄດ້ເລັ່ງໃສ່ເພີ່ມຈຳນວນປະຊາຊົນທີ່ໄດ້ຮັບການຊ່ວຍເຫຼືອທາງດ້ານກົດຫມາຍໃນແຂວງເປົ້າໝາຍ, ລັດຖະກອນ, ສະມາຊິກ ສພຊ ແລະ ສພຂ ໃນແຂວງເປົ້າໝາຍທີ່ຮັບຮູ້ຫຼັກການສ້າງລັດທີ່ປົກຄອງດ້ວຍກົດໝາຍໃນວຽກງານການບໍລິຫານລັດທີ່ຖືວ່າເປັນຫຼັກການຂອງການເຂົ້າເຖິງຄວາມຍຸຕິທຳ, ເປີເຊັນຂອງນັກສຶກສາກົດໝາຍທີ່ປະກອບສ່ວນເຂົ້າໃນສູນບໍລິການກົດຫມາຍເພື່ອປະຊາຊົນ, ຂອງ ສຍຊ ທີ່ສາມາດນາສະເໜີບົດຮຽນຂອງພວກເຂົາເຂົ້າໃນການຊ່ວຍເຫຼືອດ້ານກົດໝາຍໃຫ້ແກ່ປະຊາຊົນ ໃນຄະດີທີ່ຕິດພັນກັບກັບ ບົດບາດຍິງ-ຊາຍ , ແລະ ຈຳນວນປະຊາຊົນທີ່ໄດ້ຮັບຂໍ້ມູນທາງດ້ານກົດຫມາຍຈາກຫ້ອງການຊ່ວຍເຫຼືອທາງດ້ານກົດຫມາຍຢູ່ ເມືອງ ແລະ ແຂວງ ໃນແຂວງເປົ້າໝາຍຈະໄດ້ມີຈຳນວນເພີ່ມຂຶ້ນເຊັ່ນກັນ.

**ກ່ຽວກັບ GIZ ລາວ**

GIZ, ໃນນາມເປັນສ່ວນໜຶ່ງຂອງການຮ່ວມມື ເຢຍລະມັນ ເພື່ອການພັດທະນາ, ໄດ້ເຄື່ອນໄຫວວຽກງານຢູ່ ສປປ ລາວນັບຕັ້ງແຕ່ປີ 1993 ຕາງຫນ້າໃຫ້ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ເຢຍລະມັນ (BMZ). ໃນປັດຈຸບັນ, GIZ ກຳລັງສະໜັບສະໜູນບັນດາໂຄງການຢູ່ໃນ 3 ຂົງເຂດບູລິມະສິດຄື: ກ) ການພັດທະນາຊົນນະບົດ, ຂ) ການອະນຸລັກຮັກສາທຳມະຊາດ ແລະ ຊັບພະຍາກອນທຳມະຊາດ ແລະ ຄ) ການພັດທະນາເສດຖະກິດແບບຍືນຍົງ.
ສຳລັບຂໍ້ມູນເພີ່ມຕື່ມ, ກະລຸນາເຂົ້າເບິ່ງທີ່ເວັບໄຊ: www.giz.de/laos

| | | | |
|---|---|---|---|
| **ຈັດພິມໂດຍ:** | Deutsche Gesellschaft für<br>Internationale Zusammenarbeit (GIZ) GmbH<br>ສຳນັກງານຂຶ້ນທະບຽນ ບອນ ແລະ ເອຈ໌ບອນ, ປະເທດເຢຍລະມັນ<br><br>ແຜນງານການມີສ່ວນຮ່ວມຂອງປະຊາຊົນ ຕໍ່ວຽກງານການປົກຄອງທີ່ດີ ແລະ ສ້າງລັດທີ່ປົກຄອງດ້ວຍກົດໝາຍ (CEGGA) ສປປ ລາວ<br><br>ຖະຫນົນວັດນາກໃຫຍ່, ບ້ານວັດນາກນ້ອຍ, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ<br>ເວັບໄຊ: www.giz.de/laos (ພາສາອັງກິດ<br>www.giz.de/laos-la (ພາສາລາວ) | **ຮູບຖ່າຍໂດຍ:**<br><br>**ຕິດຕໍ່:**<br><br><br><br><br>**ຕາງຫນ້າໃຫ້:** | ©GIZ/CEGGA, @GIZ/Phoonsab<br><br>Dr Pamela Jawad,<br>Pamela.jawad@giz.de<br><br>ຫ້ອງການ GIZ ຈະເປັນຜູ້ຮັບຜິດຊອບຕໍ່ເນື້ອໃນສິ່ງພິມດັ່ງກ່າວນີ້.<br><br>ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ເຢຍລະມັນ (BMZ), ສະຫະພາບເອີຣົບ (EU), ອົງການເພື່ອການພັດທະນາ ແລະ ການຮ່ວມມືຂອງ ສະວິດເຊີແລນ (SDC) |
| **ລົງວັນທີ:**<br>**ອອກແບບໂດຍ:** | ເດືອນພະຈິກ 2023<br>ແຜນງານ CEGGA ສປປ ລາວ, ຫ້ອງການ GIZ | **ຂໍ້ມູນເພີ່ມຕື່ມ** | https://www.giz.de/en/worldwide/73603.html |